ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມກິລາລະດັບສູງ

ເລກທີ ๔๐๒ /ກສ
ນະຄອນຫຼວງວຽງຈັນ, ວັນທີ ๗ ກັນຍາ 2018

# ບົດລາຍງານ

ຮຽນ : ທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ

ເລື່ອງ : ຜົນສຳເລັດການເຂົ້າຮ່ວມແຂ່ງຂັນກິລາເອຊຽນເກມ ຄັ້ງທີ 18 ແຕ່ວັນທີ 18/08-2/09/2018 ທີ່ນະຄອນຫຼວງຈາກາຕາ ແລະ ເມືອງປາແລມບັງ ປະເທດອິນໂດເນເຊຍ ເປັນເຈົ້າພາບ.

- ອີງຕາມ : ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 465/ຫສນຍ.ກລຂ, ລົງວັນທີ 30/3/2018 ເຫັນດີອະນຸມັດໃຫ້ກະຊວງສຶກສາທິການ ແລະ ກິລາ ເຂົ້າຮ່ວມການແຂ່ງຂັນກິລາເອຊຽນເກມ ຄັ້ງທີ 18 ຢູ່ປະເທດ ອິນໂດເນເຊຍ ແຕ່ວັນທີ 18/8-02/9/2018.
- ອີງຕາມ : ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ສະບັບເລກທີ 3708/ສສກ.ກສ ລົງວັນທີ 16/07/2018

ກົມກິລາລະດັບສູງ, ຕາງໜ້າໃຫ້ຄະນະຮັບຜິດຊອບກິລາລາວ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຊາບວ່າ: ງານມະຫາກິລາເອຊຽນເກມ ແມ່ນງານກິລາໃນລະດັບພາກພື້ນອາຊີ ທີ່ຈັດຕັ້ງຂຶ້ນໂດຍຄະນະກຳມະການໂອແລມປິກອາຊີ(OCA) ລວມທັງໝົດ 45 ປະເທດ, ຊຶ່ງໄດ້ຈັດຂຶ້ນທຸກໆ 4 ປີ ໂດຍມີການຜັດປ່ຽນກັນເປັນເຈົ້າພາບ ຕາມເງື່ອນໄຂຄວາມພ້ອມຮອບດ້ານຕາມມາດຕະຖານຂອງຄະນະກຳມະການກິລາໂອແລມປິກອາຊີ (OCA) ວາງອອກ.

ງານມະຫາກຳກິລາເອຊຽນຄັ້ງທີ 1 ໄດ້ຈັດຂຶ້ນທີ່ປະເທດອິນເດຍ ເປັນເຈົ້າພາບ ໃນປີ 1951.

ສຳລັບງານມະຫາກຳກິລາເອຊຽນເກມຄັ້ງທີ 18 ໄດ້ຈັດຂຶ້ນທີ່ນະຄອນຫຼວງຈາກາຕາ ແລະ ປາແລມບັງ ປະເທດອິນໂດເນເຊຍ ແຕ່ວັນທີ 18/08-02/09/2018.

**ຜົນງານໃນການເຂົ້າຮ່ວມງານມະຫາກຳກິລາເອຊຽນເກມແຕ່ລະຄັ້ງຂອງຄະນະກິລາລາວທີ່ຜ່ານມາ:**

| | | | |
|---|---|---|---|
| - | ປີ 1990 ເອຊຽນເກມຄັ້ງທີ 11 ຢູ່ປັກກິ່ງ ສປ ຈີນ | | ຫຼຽນທອງ 1 ຫຼຽນ. |
| - | ປີ 1998 ເອຊຽນເກມຄັ້ງທີ 13 ຢູ່ບາງກອກ ປະເທດໄທ | | ຫຼຽນທອງ 1 ຫຼຽນ. |
| - | ປີ 2002 ເອຊຽນເກມຄັ້ງທີ 14 ຢູ່ບຸຊານ ສ.ເກົາຫຼີ | | ຫຼຽນທອງ 2 ຫຼຽນ. |
| - | ປີ 2006 ເອຊຽນເກມຄັ້ງທີ 15 ຢູ່ໂດຮາ ປະເທດ ກາຕາ | ຫຼຽນເງິນ 1 ຫຼຽນ. | |
| - | ປີ 2010 ເອຊຽນເກມຄັ້ງທີ 16 ຢູ່ກວາງໂຈ ສປ ຈີນ | | ຫຼຽນທອງ 2 ຫຼຽນ. |
| - | ປີ 2014 ເອຊຽນເກມຄັ້ງທີ 17 ຢູ່ອິນຊອນ ສ.ເກົາຫຼີ | ຫຼຽນເງິນ 1 ຫຼຽນ | ຫຼຽນທອງ 2 ຫຼຽນ. |
| - | ປີ 2018 ເອຊຽນເກມຄັ້ງທີ 18 ຢູ່ຈາກາຕາ ແລະ ປາແລມບັງ | ຫຼຽນເງິນ 2 ຫຼຽນ | ຫຼຽນທອງ 3 ຫຼຽນ. |

**1. ການເຂົ້າຮ່ວມງານມະຫາກຳກິລາເອຊຽນເກມຄັ້ງທີ 18 ຂອງ ສປປ ລາວ.**

ໃນງານເອຊຽນເກມຄັ້ງນີ້ ສປປ ລາວ ໄດ້ສົ່ງຄະນະນຳ, ຄູຝຶກ ແລະ ນັກກິລາ ເຂົ້າຮ່ວມທັງໝົດ 217 ຄົນ ປະກອບດ້ວຍ 18 ປະເພດກິລາ ແລະ 1 ປະເພດກິລາສາທິດ ຄື :

- **ປະເພດກິລາທີ່ຢູ່ໃນແຜນງົບປະມານລັດຖະບານປະກອບມີ 12 ປະເພດກິລາ :**

| | | | |
|---|---|---|---|
| 1. ກະຕໍ້ | 4. ວູຊູ | 7. ກາຣາເຕ | 10. ແລ່ນ-ລານ |
| 2. ປັນຈັກສິລັດ | 5. ເທຄວັນໂດ | 8. ມວຍສາກົນ | 11. ລອຍນ້ຳ |
| 3. ຢູໂດ | 6. ລິດຖີບ | 9. ຍິງທະນູ | 12. ຍົກນ້ຳໜັກ |



Scanned with CamScanner

- ປະເພດກິລາກຸ້ມຕົນເອງຮອບດ້ານປະກອບມີ 6 ປະເພດກິລາ ແລະ 1 ປະເພດກິລາສາທິດ :
  1. ປີ້ງປ້ອງ,
  2. ບານເຕະ,
  3. ຊອບເຫັນນິດ,
  4. ພາລາກາຍຄິງ
  5. ຍິງປືນ
  6. ເບສະບອນ
  7. ກິລາອິສະປອດ ( ກິລາສາທິດ )

**2.ຜົນສຳເລັດຂອງການເຂົ້າຮ່ວມງານແຂ່ງຂັນກິລາເອຊຽນເກມຄັ້ງທີ 18 ຂອງ ສປປ ລາວ.**

ຜ່ານການເຂົ້າຮ່ວມການແຂ່ງຂັນຄັ້ງນີ້ ນັກກິລາຂອງ ສປປ ລາວ ປະສົບຜົນສຳເລັດເກີນຄາດໝາຍ ສາມາດ ຍາດໄດ້ ຫຼຽນເງິນ 2 ຫຼຽນ ແລະ ຫຼຽນທອງ 3 ຫຼຽນ ລວມທັງໝົດ 5 ຫຼຽນ ຄື :

1. **ກິລາປັນຈັກສິລັດໄດ້ 3 ຫຼຽນ :**
   - ຫຼຽນເງິນ 1 ຫຼຽນ (ປະເພດຕໍ່ສູ້ລຸ້ນນ້ຳໜັກ 55-60 ກິໂລ(ຍິງ),
   - ຫຼຽນທອງ 2 ຫຼຽນ (ລຸ້ນນ້ຳໜັກ 50-55 ກິໂລ(ຍິງ) ແລະ ລຸ້ນນ້ຳໜັກ 50-55 ກິໂລ(ຊາຍ)).
2. **ກິລາກະຕໍ້ໄດ້ 2 ຫຼຽນ :**
   - ຫຼຽນເງິນ 1 ຫຼຽນ (ລາຍການທີມຊຸດຄຸ່ຊາຍ ລວມ 9 ຄົນ),
   - ຫຼຽນທອງ 1 ຫຼຽນ (ລາຍການທີມຍິງ 4 ຄົນ ລວມ 6 ຄົນ).

ຄະນະກິລາລາວໄດ້ຫຼຽນຫຼາຍກວ່າທຸກຄັ້ງທີ່ເຄີຍເຂົ້າຮ່ວມຜ່ານມາ ຈາກບັນດາປະເທດທີ່ເຂົ້າຮ່ວມການ ແຂ່ງຂັນທັງໝົດຈຳນວນ 45 ປະເທດ, ສປປ ລາວ ຈັດຢູ່ໃນອັນດັບທີ 31 ຈາກ 45 ປະເທດເຂົ້າຮ່ວມ.

ລາຍຊື່ ນັກກິລາ ຜູ້ທີ່ໄດ້ຫຼຽນເງິນ ແລະ ຫຼຽນທອງ

| I. | ປະເພດກິລາ | ລາຍການ | ຊື່ ແລະ ນາມສະກຸນ | ປະເພດຫຼຽນ |
|---|---|---|---|---|
| 1 | ປັນຈັກສິລັດ | ລຸ້ນນ້ຳໜັກ 55-60 ກິໂລ | ນາງ ນ້ອງອ້ອຍ ວົງພັກດີ | 1 ຫຼຽນເງິນ |
| 2 | | ລຸ້ນນ້ຳໜັກ 55-60 ກິໂລ | ນາງ ອໍລະໄທ ສຸນທະວົງ | 1 ຫຼຽນທອງ |
| 3 | | ລຸ້ນນ້ຳໜັກ 55-60 ກິໂລ | ທ້າວ ໂບ້ ທຳມະວົງສາ | 1 ຫຼຽນທອງ |
| **II.** | **ປະເພດກິລາ** | **ລາຍການ** | **ຊື່ ແລະ ນາມສະກຸນ** | **ປະເພດຫຼຽນ** |
| 1 | ກະຕໍ້ | ກະຕໍ້ທີມຊຸດຄຸ່ຊາຍ | 1.ທ້າວ ໜຸ່ມ ສຸວັນນະລິດ | 1 ຫຼຽນເງິນ |
| | | | 2.ທ້າວ ກັນຕະນາ ນັນທິເສນ | |
| | | | 3.ທ້າວ ໂຍທິນ ສົມບັດພູທອນ | |
| | | | 4.ທ້າວ ກອງສີ ຢ່າງ | |
| | | | 5.ທ້າວ ລັກສະນະໄຊ ບຸນໄພວັນ | |
| | | | 6.ທ້າວ ຈັນທະລັກ ຈັນທະວົງ | |
| | | | 7.ທ້າວ ພິດທະສັນ ບຸນປະເສີດ | |
| | | | 8.ທ້າວ ໄຊບັນດິດ ທະດາມາບຸດ | |
| | | | 9.ທ້າວ ພອນສະຫວັນ ແກ້ວວິເສດ | |
| 2 | | ທີມຍິງ 4 ຄົນ | 1.ນາງ ກ້ອຍ ໄຊຍະວົງ | 1 ຫຼຽນທອງ |
| | | | 2.ນາງ ນໍ່ຄຳ ວົງໄຊ | |
| | | | 3.ນາງ ສອນສະຫວັນແກ້ວສຸລິຍາ | |
| | | | 4.ນາງ ຈຽບ ບັນຊາວົງ | |
| | | | 5.ນາງ ນວນດຳ ວໍລະບຸດ | |
| | | | 6.ນາງ ສັນຕິສຸກ ຈັນດາລາ | |

Scanned with CamScanner

**3. ຈຸດດີ, ຂໍ້ຄົງຄ້າງ ສາເຫດທີ່ພາໃຫ້ມີຈຸດດີ ແລະ ຂໍ້ຄົງຄ້າງ.**

- **ຈຸດດີ :**
  - ໄດ້ຮັບການຊີ້ນຳ ນຳພາຢ່າງໃກ້ຊິດຈາກຂັ້ນເທິງ,
  - ໄດ້ມີການກະກຽມ ແຜນການ ແຜນງານ ແຜນຄົນ ແລະ ແຜນງົບປະມານເປັນຢ່າງດີ,
  - ຄະນະຮັບຜິດຊອບຄູຝຶກ ແລະ ນັກກິລາໄດ້ມີຄວາມຕັດສິນໃຈສູງຕໍ່ໜ້າທີ່ວຽກງານທີ່ຕົນເອງຮັບຜິດຊອບ ແລະ ມີຄວາມສາມັກຄີເປັນເອກກະພາບ.

- **ສາຍເຫດທີ່ພາໃຫ້ມີຈຸດດີ :**
  - ຄະນະນຳຂັ້ນເທິງໄດ້ລົງໃຫ້ທິດຊີ້ນຳ ໄກ້ຊິດຕິດແທດ ໂອ້ລົມໃຫ້ກຳລັງໃຈແກ່ຄູຝຶກ ແລະ ນັກກິລາ ເພື່ອເຮັດໃຫ້ມີແນວຄິດອຸ່ນອ່ຽນທຸ່ນທ່ຽງ ໃນການຝຶກຊ້ອມ ແລະ ເຂົ້າຮ່ວມການແຂ່ງຂັນ.

- **ຂໍ້ຄົງຄ້າງ :**
  - ການສະໜອງງົບປະມານໃນຊ່ວງໄລຍະກະກຽມຝຶກແອບເບື້ອງຕົ້ນຍັງຊັກຊ້າ ເປັນເຫດໃຫ້ການສະໜອງອຸປະກອນການຝຶກແອບ ແລະ ອັດຕາບຳລຸງໃຫ້ກັບນັກກິລາບາງປະເພດບໍ່ໄດ້ໄປຕາມແຜນການທີ່ວາງໄວ້.
  - ການສົ່ງນັກກິລາໄປເຂົ້າຮ່ວມແຂ່ງຂັນທົດສອບຢູ່ຕ່າງປະເທດ ມີລັກສະນະຊັກຊ້າຍ້ອນງົບປະມານ.

**4.ບົດຮຽນທີ່ຖອດຖອນໄດ້ :**

- ເພີ່ມທະວີການຊີ້ນຳ ນຳພາທັງດ້ານແນວຄິດການເມືອງໃຫ້ແກ່ຄະນະນຳ, ຄູຝຶກ ແລະ ນັກກິລາຢ່າງເປັນປົກກະຕິ.
- ສະຫະພັນກິລາແຫ່ງຊາດຕ້ອງເປັນເຈົ້າການໃນການຄັດເລືອກ ແລະ ສັນຫາຕົວນັກກິລາທີ່ມີຄວາມສາມາດສູງ ເພື່ອເຂົ້າສຸມຝຶກຊ້ອມ ແລະ ເຂົ້າຮ່ວມການແຂ່ງຂັນ.
- ຕ້ອງເອົາລະບົບວິທະຍາສາດການກິລາເຂົ້າຊ່ວຍໃນການພັດທະນາກິລາລະດັບສູງ.
- ສະໜອງງົບປະມານໃຫ້ແກ່ການພັດທະນາກິລາລະດັບສູງ ໂດຍສະເພາະການກະກຽມເຂົ້າຮ່ວມແຂ່ງຂັນໃນລະດັບຕ່າງໆ ໃຫ້ທ່ວງທັນກັບຄວາມຮຽກຮ້ອງຕ້ອງການ.

ດັ່ງນັ້ນ, ກົມກິລາລະດັບສູງຈຶ່ງຮຽນລາຍງານມາຍັງທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເພື່ອຊາບ ແລະ ຂໍທິດຊີ້ນຳຕາມທາງຄວນດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

**ຫົວໜ້າກົມ**

Scanned with CamScanner

ຜົນງານໃນການເຂົ້າຮ່ວມງານມະຫາກຳກິລາເອຊຽນເກມແຕ່ລະຄັ້ງຂອງຄະນະກິລາລາວທີ່ຜ່ານມາ:

- ປີ 1990 ເອຊຽນເກມຄັ້ງທີ 11 ຢຸ່ປັກກິ່ງ ສປ ຈີນ — ຫຼຽນທອງ 1 ຫຼຽນ.
- ປີ 1998 ເອຊຽນເກມຄັ້ງທີ 13 ຢຸ່ບາງກອກ ປະເທດໄທ — ຫຼຽນທອງ 1 ຫຼຽນ.
- ປີ 2002 ເອຊຽນເກມຄັ້ງທີ 14 ຢຸ່ບຸຊານ ສ.ເກົາຫຼີ — ຫຼຽນທອງ 2 ຫຼຽນ.
- ປີ 2006 ເອຊຽນເກມຄັ້ງທີ 15 ຢຸ່ໂດຮາ ປະເທດ ກາຕາ — ຫຼຽນເງິນ 1 ຫຼຽນ.
- ປີ 2010 ເອຊຽນເກມຄັ້ງທີ 16 ຢຸ່ກວາງໂຈ ສປ ຈີນ — ຫຼຽນທອງ 2 ຫຼຽນ.
- ປີ 2014 ເອຊຽນເກມຄັ້ງທີ 17 ຢຸ່ອິນຊອນ ສ.ເກົາຫຼີ — ຫຼຽນເງິນ 1 ຫຼຽນ, ຫຼຽນທອງ 2 ຫຼຽນ.
- ປີ 2018 ເອຊຽນເກມຄັ້ງທີ 18 ຢຸ່ຈາກາຕາ ແລະ ປາແລມບັງ — ຫຼຽນເງິນ 2 ຫຼຽນ, ຫຼຽນທອງ 3 ຫຼຽນ.

ລາຍຊື່ ນັກກິລາ ຜູ້ທີ່ໄດ້ຫຼຽນເງິນ ແລະ ຫຼຽນທອງ ໃນງານມະຫາກຳກິລາເອຊຽນເກມ ຄັ້ງທີ 18 ປະເທດ ອິນໂດເນເຊຍ ແຕ່ວັນທີ 18/08-02/09/2018.

| I. | ປະເພດກິລາ | ລາຍການ | ຊື່ ແລະ ນາມສະກຸນ | ປະເພດຫຼຽນ |
|---|---|---|---|---|
| 1 | ປັນຈັກສິລັດ | ລຸ້ນນ້ຳໜັກ 55-60 ກິໂລ | ນາງ ນ້ອງອ້ອຍ ວົງພັກດີ | 1 ຫຼຽນເງິນ |
| 2 | | ລຸ້ນນ້ຳໜັກ 55-60 ກິໂລ | ນາງ ອໍລະໄທ ສຸນທະວົງ | 1 ຫຼຽນທອງ |
| 3 | | ລຸ້ນນ້ຳໜັກ 55-60 ກິໂລ | ທ້າວ ໂບ້ ທຳມະວົງສາ | 1 ຫຼຽນທອງ |
| **II.** | **ປະເພດກິລາ** | **ລາຍການ** | **ຊື່ ແລະ ນາມສະກຸນ** | **ປະເພດຫຼຽນ** |
| 1 | ກະຕໍ້ | ກະຕໍ້ທີມຊຸດຄູ່ຊາຍ | 1.ທ້າວ ໜຸ່ມ ສຸວັນນະລິດ | 1 ຫຼຽນເງິນ |
| | | | 2.ທ້າວ ກັນຕະນາ ນັນທິເສນ | |
| | | | 3.ທ້າວ ໂຍທິນ ສີມບັດພູທອນ | |
| | | | 4.ທ້າວ ກອງສີ ຢ່າງ | |
| | | | 5.ທ້າວ ລັກສະນະໄຊ ບຸນໄພວັນ | |
| | | | 6.ທ້າວ ຈັນທະລັກ ຈັນທະວົງ | |
| | | | 7.ທ້າວ ພິດທະສັນ ບຸນປະເສີດ | |
| | | | 8.ທ້າວ ໄຊບັນດິດ ທະດາມາບຸດ | |
| | | | 9.ທ້າວ ພອນສະຫວັນ ແກ້ວວິເສດ | |
| 2 | | ທີມຍິງ 4 ຄົນ | 1.ນາງ ກ້ອຍ ໄຊຍະວົງ | 1 ຫຼຽນທອງ |
| | | | 2.ນາງ ນໍ່ຄຳ ວົງໄຊ | |
| | | | 3.ນາງ ສອນສະຫວັນແກ້ວສຸລິຍາ | |
| | | | 4.ນາງ ຈຽບ ບັນຊາວົງ | |
| | | | 5.ນາງ ນວນດຳ ວໍລະບຸດ | |
| | | | 6.ນາງ ສັນຕິສຸກ ຈັນດາລາ | |

Scanned with CamScanner

ASIAN GAMES
2018 | Jakarta Palembang

ພິທີມອບຫຼຽນເງິນ ແລະ ຫຼຽນທອງກິລາປັນຈັກສີລັດ



Scanned with CamScanner

ASIAN GAMES
2018 | Jakarta Palembang

ພາບບັນຍາກາດແຫ່ງຄວາມພາກພູມໃຈຂອງຄະນະນຳ ແລະ ນັກກິລາລາວ

ASIAN GAMES 2018 | Jakarta Palembang

- ອັດສິດຫຼຽນທອງກະຕໍ້ 500 ໂດລາ ແລະ ຫຼຽນເງິນ ກະຕໍ້ ລາຍການທີມຊຸດຄຸ່ຊາຍ ຈຳນວນ 1000 ໂດລາ ເປັນ ຕົວແທນມອບໂອຍທ່ານ ສີງຄຳ ນາລີນ ຮອງຫົວໜ້າກົມກິລາລະດັບສຸງ ກະຊວງສຶກສາທິການ ແລະ ກິລາ

- ອັດສິດຫຼຽນທອງກະຕໍ້ ລາຍການທີມຍິງ 4 ຄົນຈຳນວນ 500 ໂດລາ ເປັນຕົວແທນມອບໂອຍທ່ານ ສີງຄຳ ນາລີນ ຮອງຫົວໜ້າກົມກິລາລະດັບສຸງ ຮອງຫົວໜ້າຄະນະກິລາລາວ

Scanned with CamScanner

ASIAN GAMES 2018 | Jakarta Palembang

- ອັດສິດຫຼຽນທອງປັນຈັກສີລັດ 250ໂດລາ ແລະ ຫຼຽນເງິນ 600ໂດລາ ປະເພດຕໍ່ສູ້ ລຸ້ນນ້ຳໜັກ 55-60 ກິໂລ (ຍິງ) ໃຫ້ກຽດມອບໂດຍທ່ານ ແສງພອນ ພົນອາມາດ ຫົວໜ້າກົມກິລາລະດັບສູງ ຫົວໜ້າຄະນະກິລາລາວ




- ອັດສິດຫຼຽນ 2 ຫຼຽນທອງປັນຈັກສີລັດ ປະເພດຕໍ່ສູ້ ລຸ້ນ 50-55 ກິໂລ (ຍິງ) ແລະ ລຸ້ນ 50-55 ກິໂລ (ຊາຍ) 500 ໂດລາ ໃຫ້ກຽດມອບໂດຍທ່ານ ແສງພອນ ພົນອາມາດ ຫົວໜ້າກົມກິລາລະດັບສູງ ຫົວໜ້າຄະນະກິລາລາວ

Scanned with CamScanner